## ຂໍ້ແນະນຳສຳລັບການຈັດກອງປະຊຸມ
## ຮັບຮອງການອອກແບບໂຄງການຍ່ອຍຂັ້ນບ້ານ

### 1. ຈຸດປະສົງ

- ເພື່ອທົບທວນ ແລະ ຮັບຮອງແບບຂອງໂຄງການຍ່ອຍ ທີ່ຈະຈັດຕັ້ງປະຕິບັດຢູ່ພາຍໃນບ້ານ ເຊັ່ນ: ຮູບຮ່າງລັກສະນະຂອງໂຄງການຍ່ອຍ, ອົງປະກອບຂອງໂຄງການຍ່ອຍ, ທີ່ຕັ້ງຂອງ ໂຄງການຍ່ອຍ
- ຮັບຮອງເອົາລາຍການວັດຖຸທີ່ຕ້ອງການ, ການປະກອບສ່ວນຂອງຊຸມຊົນ, ຄາດຄະເນງົບປະມານທີ່ຈະນຳໃຊ້ ແລະ ຮັບຮອງເອົາແຜນການຄຸ້ມຄອງນຳໃຊ້ໂຄງການຍ່ອຍ
- ກຳນົດວິທີການຈັດຊື້-ຈັດຈ້າງ ໂຄງການຍ່ອຍ

### 2. ຄາດໝາຍທີ່ຈະໄດ້ຮັບ

- ຂະໜາດຂອງໂຄງການຍ່ອຍ, ສະຖານທີ່ຕັ້ງໂຄງການຍ່ອຍ ແລະ ແຜນການຈັດຕັ້ງປະຕິບັດໂຄງການຍ່ອຍ
- ທີມງານຕ່າງໆຂັ້ນບ້ານ ໄດ້ຖືກສ້າງຕັ້ງຂຶ້ນ
- ມີການມອບໝາຍໜ້າວຽກໃຫ້ກັນ ແລະ ກັນ (ລວມທັງການຄຸ້ມຄອງບັນຊີເງິນໂຄງການ ຍ່ອຍ) ແລະ ທີມງານຕ່າງໆຂັ້ນບ້ານ ມີຄວາມເຂົ້າໃຈໜ້າທີ່ພາລະບົດບາດຂອງຕົນ

**ໝາຍເຫດ:** ຢູ່ໃນກອງປະຊຸມດັ່ງກ່າວນີ້ ຈະບໍ່ຮັບຮອງເອົາໂຄງການຍ່ອຍໃດ ທີ່ການກະກຽມບົດສະ ເໜີໂຄງການບໍ່ສຳເລັດ ຫຼື ບໍ່ທັນໄດ້ເຮັດປະເມີນຜົນທາງດ້ານສິ່ງແວດລ້ອມ ແລະ ສັງຄົມ, ຖ້າມີ.

#### 1) ປະທານກອງປະຊຸມ

- ຫົວໜ້າກຸ່ມບ້ານພັດທະນາ

#### 2) ຜູ້ດຳເນີນກອງປະຊຸມ

- ທີມງານ ທລຍ ເມືອງ
- ຜູ້ປະສານງານກຸ່ມບ້ານ

#### 3) ຜູ້ເຂົ້າຮ່ວມກອງປະຊຸມ

- ອຳນາດການປົກຄອງບ້ານ
- ທີມງານຈັດຕັ້ງປະຕິບັດໂຄງການຍ່ອຍຂັ້ນບ້ານ
- ຊາວບ້ານທັງໝົດ ຄວນເຂົ້າຮ່ວມ ຫຼື ຢ່າງໜ້ອຍ 50% ຂອງຈານວນຜູ້ໃຫ່ຍ (ອາຍຸ 15 ປີຂຶ້ນໄປ), ຢ່າງໜ້ອຍ 40% ຂອງຈານວນຜູ້ຍິງທີ່ເປັນຜູ້ໃຫ່ຍ (ອາຍຸ 15 ປີຂຶ້ນໄປ), ແລະ ຢ່າງໜ້ອຍ 60% ຂອງຈຳນວນຄອບຄົວຜູ້ທຸກຍາກພາຍໃນບ້ານຕ້ອງໄດ້ເຂົ້າຮ່ວມກອງປະ ຊຸມ ດັ່ງກ່າວນີ້ເຊັ່ນ ດຽວກັນ, ຖ້າບໍ່ດັ່ງນັ້ນ ໃຫ້ເລື່ອນກອງປະຊຸມດັ່ງກ່າວນີ້ອອກໄປ"
- ຜູ້ຕາງໜ້າຫ້ອງການທີ່ກ່ຽວຂ້ອງ
- ຜູ້ຕາງໜ້າ ຫ້ອງການພັດທະນາຊົນນະບົດຮອບດ້ານເມືອງ

4) **ສະຖານທີ່ຈັດກອງປະຊຸມ**

- ບ້ານທີ່ໄດ້ຮັບໂຄງການຍ່ອຍ

5) **ກຳນົດເວລາ**

- ເຄິ່ງມື້ (ຈັດຂຶ້ນ ຫລັງຈາກທີ່ສຳເລັດການອອກແບບໂຄງການຍ່ອຍແລ້ວ 2 ອາທິດ)

6) **ຂັ້ນຕອນ ແລະ ເນື້ອໃນກອງປະຊຸມ**

- ນຳສະເໜີ ຈຸດປະສົງ ແລະ ແນະນຳ ຜູ້ເຂົ້າຮ່ວມກອງປະຊຸມ
- ລາຍງານ ກ່ຽວກັບຂັ້ນຕອນ ໃນການດຳເນີນການສຳຫລວດ-ອອກແບບໂຄງການຍ່ອຍ (ລວມທັງຍົກໃຫ້ເຫັນຄວາມເປັນເຈົ້າການຂອງຊຸມຊົນ)
- ນຳສະເໜີ ແບບຂອງແຕ່ລະໂຄງການຍ່ອຍ
    - ຮູບຮ່າງລັກສະນະຂອງໂຄງການຍ່ອຍ
    - ອົງປະກອບຂອງໂຄງການຍ່ອຍ
    - ທີ່ຕັ້ງຂອງໂຄງການຍ່ອຍ
    - ງົບປະມານ ໂດຍຄາດຄະເນ ທີ່ຈະນຳໃຊ້, ກວດກາບັນຫາທາງດ້ານສິ່ງແວດລ້ອມ ແລະ ສັງຄົມ (ລາຍລະອຽດ ຂອງການປະເມີນຜົນ, ຖ້າມີ)
    - ການປະກອບສ່ວນຂອງຊຸມຊົນ (ລວມທັງການປະກອບສ່ວນທີ່ດິນ ຫຼື ຊັບສິນ ແລະລວມທັງການທົດແທນແທນຄືນ ຖ້າມີ)
    - ປຶກສາຫາລືແຜນການບູລະນະສ້ອມແປງ ໂຄງການຍ່ອຍ
    - ປຶກສາຫາລື ກ່ຽວກັບວິທີການຈັດຊື້-ຈັດຈ້າງ ໂຄງການຍ່ອຍ
    - ປຶກສາຫາລື ແລະ ວາງແຜນການໃຊ້ຈ່າຍເງິນຂອງໂຄງການຍ່ອຍ ບ້ວງເງິນບໍລິຫານ ໂຄງການຍ່ອຍ 5% (ໃນນັ້ນ: 3% ສາລັບບ້ານທີ່ໄດ້ຮັບຜົນປະໂຫຍດ ແລະ ອີກ 2% ສາລັບການເຄື່ອນໄຫວວຽກງານຂອງຜູ້ປະສານງານ ແລະ ທີມງານອື່ນໆຂອງ ຂັ້ນກຸ່ມບ້ານ)

- ຮັບຮອງເອົາກິດຈະກຳຝຶກອົບຮົມ ທີ່ຕິດພັນກັບໂຄງການຍ່ອຍພື້ນຖານໂຄງລ່າງ, ຖ້າມີ
- ທົບທວນຄືນ ຜູ້ປະສານງານກຸ່ມບ້ານ (ອີງໃສ່ຂໍ້ແນະນຳ ການຄັດເລືອກຜູ້ປະສານງານກຸ່ມບ້ານ ໂດຍສະເພາະຜູ້ປະສານງານກຸ່ມບ້ານຕ້ອງມາຈາກບ້ານທີ່ຈະໄດ້ຮັບຜົນປະໂຫຍດ ທີ່ ທລຍ ຈະໃຫ້ການຊ່ວຍເຫລືອໃນໄລຍະ 4 ປີ ແລະ ໃຫ້ແມ່ນຜູ້ຍິງຢ່າງໜ້ອຍ 1 ຄົນ ຫຼື ແມ່ນຜູ້ຍິງທັງໝົດຍິ່ງເປັນການດີ)
- ທົບທວນຄືນ ກ່ຽວກັບກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ
    - ຄະນະໄກ່ເກັ່ຽຂັ້ນບ້ານ
    - ຊ່ອງທາງໃນການສະແດງຄຳຄິດຄຳເຫັນ
    - ການເຄື່ອນໄຫວ ໃນໄລຍະຜ່ານມາ (ຈຳນວນຄຳຄິດຄຳເຫັນທີ່ໄດ້ຮັບ, ເລື່ອງຫຍັງແດ່?, ໄດ້ແກ້ໄຂຈັກກໍລະນີແລ້ວ, ຍັງຈັກກໍລະນີ ຍັງບໍ່ທັນໄດ້ແກ້ໄຂ?
- ນຳສະເໜີ ຂັ້ນຕອນຈັດຕັ້ງປະຕິບັດໂຄງການຍ່ອຍໃນຕໍ່ໜ້າ

3. ອຸປະກອນຮັບໃຊ້

| | ລາຍການ | ຈຳນວນ |
|---|---|---|
| **ແບບຟອມ** | ແບບຟອມບັນທຶກ (PDKV_MT) | 1 |
| | ໃບລົງທະບຽນ ຜູ້ເຂົ້າຮ່ວມກອງປະຊຸມ | 1 |
| | ແບບຟອມເບີກຈ່າຍເບັ້ຽລ້ຽງ | 1 |
| | ແບບຟອມລາຍງານກອງປະຊຸມ | 1 |
| **ອຸປະກອນ** | ເຈັ້ຍແຜ່ນໃຫ່ຍ | 5 |
| | ເຟີດຂຽນເຈັ້ຽ | 2 |
| | ສະກ໊ອດຕິດເຈັ້ຽ | 1 |
| **ເອກະສານອ້າງອີງ** | ບົດສະເໜີ | |
| | ໂຄງການຍ່ອຍທີ່ກະກຽມສຳເລັດແລ້ວ | |
| **ເຄື່ອງມື IEC ອື່ນໆ** | ປົດສະເຕີ FRALA | 1 |
| | ເພັງ ທລຍ | 1 |
| | ສະປອດໂຄສະນາ | 1 |
| | ສາລະຄະດີ ຕ່າງໆ | 1 |
| | ເຄື່ອງຂະຫຍາຍສຽງ | 1 |

4. ໜ້າວຽກ ທີ່ຈະຕ້ອງປະຕິບັດ ຫລັງຈາກກອງປະຊຸມ

| ໜ້າວຽກ | ພາກສ່ວນຮັບຜິດຊອບ |
|---|---|
| ນຳເອົາ ຂໍ້ຕົກລົງຂອງກອງປະຊຸມຄັ້ງນີ້ ໄປຕິດໄວ້ຢູ່ຫໍຂ່າວຂອງກຸ່ມບ້ານ | ຜູ້ປະສານງານກຸ່ມບ້ານ |
| ຮັບປະກັນວ່າ ເອກະສານຕ່າງໆ ຈາກກອງປະຊຸມທັງໝົດ ໄດ້ຖືກເກັບຮັກສາ ໄວ້ເປັນຢ່າງດີຢູ່ບ້ານ ແລະ ເຮັດສຳເນົາ 1 ຊຸດສົ່ງໃຫ້ຫ້ອງການ ທລຍ ເມືອງ ໄວເທົ່າທີ່ຈະໄວໄດ້ | ທີມງານຈັດຕັ້ງປະຕິບັດຂັ້ນບ້ານ |
| ປ້ອນຂໍ້ມູນ ກອງປະຊຸມ (PDKV_MT) ເຂົ້າໃນຖານຂໍ້ມູນ MIS | M&E ແຂວງ |

---